Moms in Prayer INTERNATIONAL™
ກຸ່ມອະທິຖານສາກົນຂອງບັນດາແມ່ງ

# ຄຸນຄ່າຫລັກ ແລະ ການປະຕິບັດທີສໍາຄັນ

## ຫລັກຄວາມເຊື່ອ

ພວກເຮົາຍຶດຫມັ້ນຄໍາປະຕິຍານແມ່ແຫ່ງການອະທິຖານສາກົນ ເຊິ່ງແມ່ນການຍອມຮັບໂດຍສ່ວນໂຕວ່າພະເຍຊູ ແມ່ນຜູ້ໄຖ່ໃຫ້ລອດ, ພະເຈົ້າ ແລະເປັນພະເຈົ້າ.

ພວກເຮົາເຊື່ອວ່າຜ່ານການອະທິຖານ ພະເຈົ້າຈະປົດປ່ອຍລິດອໍານາດຂອງພະອົງໃຫ້ກັບເດັກນ້ອຍ ແລະ ໂຮງຮຽນຕ່າງໆຂອງພວກເຮົາ. ຄວາມເຊື່ອຂອງພວກເຮົາຢູ່ໃນພະເຈົ້າຜູ້ຟັງແລະຕອບຄໍາອະທິຖານຂອງພວກເຮົາ.

## ເປົ້າຫມາຍຫລັກ

ພັນທະກິດ: ແມ່ແຫ່ງການອະທິຖານສາກົນຈະມີຜົນຕໍ່ເດັກນ້ອຍແລະໂຮງຮຽນໃນທົ່ວໂລກເພື່ອພະເຍຊູໂດຍຜ່ານການອະທິຖານເຕົ້າໂຮມຂອງແມ່ທັງຫລາຍ.

ວິໃສທັດ/ນິມິດ: ວິໃສທັດຂອງພວກເຮົາແມ່ນໃຫ້ທຸກໆໂຮງຮຽນໃນທົ່ວໂລກໄດ້ຮັບການອະທິຖານເພື່ອ.

## ລໍາດັບຄວາມສໍາຄັນ

- ພະເຈົ້າ-ທໍາອິດ
- ຄົວຄອບ-ທີສອງ/ສໍາຮອງ
- ການຮັບໃຊ້-ທີສາມ

## ຮູບແບບ ແລະ ວິທີການ

- ການອະທິຖານເຫັນດີຮ່ວມກັນ
- ສີ່ ບາດກ້າວຂອງການອະທິຖານ
- ການອະທິຖານຜ່ານພະຄໍາ
- ການອະທິຖານແບບສະເພາະເຈາະຈົງ
- ການອະທິຖານແບບການປະກາດ

## ການປະຕິບັດທີ່ສໍາຄັນ

ພວກເຮົາແມ່ນຜູ້ຮັບໃຊ້ຂອງພະເຈົ້າແລະຍອມຈໍາຫນົນຕໍ່ການນໍາແລະການຊ່ອຍເຫລືອຂອງພະອົງ.

ພວກເຮົາບໍ່ໄວ້ໃຈໃນລົດມ້າ ແຕ່ໄວ້ໃຈໃນນາມຊື່ຂອງພະເຈົ້າຂອງພວກເຮົາ. ເພງສັນລະເສີນ 20:7.

ພວກເຮົາແມ່ນການສ້າງສາວົກ ແລະການຂະຫຍາຍ/ເພີ່ມທະວີພັນທະກິດ/ການຮັບໃຊ້.

- ການສ້າງສາວົກ: ສອນໃຫ້ແມ່ຍິງຮູ້ການອະທິຖານແລະການໄວ້ວາງໃຈພະເຈົ້າ
- ການຂະຫຍາຍ/ເພີ່ມທະວີ: ທຸກໆໂຮງຮຽນຈະໄດ້ຮັບການອະທິຖານເພື່ອຈາກກຸ່ມ

ພວກເຮົາຖືກເອີ້ນເພື່ອຈະຮັບໃຊ້ແມ່ທັງຫລາຍຜ່ານການອະທິຖານ.

ພວກເຮົາມີຄວາມຮັບຜິດຊອບໃນການສະເຫນີພັນທະກິດແລະວິໃສທັດໂດຍຄວາມຮັກແລະຈັດຈິງ/ຊື່ຕົງ.

ພວກເຮົາເບິ່ງແຍງ,  ຫນູນໃຈ, ເສີມສ້າງ ໂດຍການເປັນແບບຢ່າງຂອງການເປັນແມ່ຍິງທີ່ປະກອບໄປດ້ວຍຄວາມຊອບທໍາ, ເຕັມດ້ວຍພະຄຸນ,ບໍ່ມີວິນຍານແຫ່ງການຕັດສິນ ແລະ ມີຄວາມບໍລິສຸດທາງເພດສໍາພັນ.

ພວກເຮົາເຊື່ອຢ່າງຫນັກແຫນ້ນ ແລະສະຫນັບສະຫນູນສະຖານບັນຂອງພະເຈົ້າຄື ຊີວິດຄູ່ຕາມພະຄໍາຂອງພັນທະສັນຍາຄວາມສໍາພັນ ລະຫວ່າງຊາຍ ແລະຍິງ.

ພວກເຮົາມີຂໍ້ຄວາມເພື່ອຈະນໍາການຫນູນໃຈແລະຄວາມຫວັງມາສູ່ແມ່ທັງຫລາຍ.

ພວກເຮົາຖືການຮັກສາຂໍ້ມູນສ່ວນໂຕຢ່າງເຄັ່ງຂັດ-ສິ່ງທີ່ຖືກອະນາຖານໃນກຸ່ມ ຈະຢູ່ໃນກຸ່ມ. ພວກເຮົາອະທິຖານເພື່ອລູກໆ ແລະໂຮງຮຽນຕ່າງໆ.

ພວກເຮົາບໍ່ແມ່ນກຸ່ມທີ່ຫນູນຫລັງໃຫ້ລັດຖະບານ: ແມ່ແຫ່ງການອະທິຖານສາກົນບໍ່ແມ່ນກຸ່ມທີ່ຫນູນຫລັງໃຫ້ລັດຖະບານແຕ່ຢ່າງໃດ. ການມີສ່ວນຮ່ວມທາງການເມືອງຫລືບັນຫາຕ່າງໆຂອງສັງຄົມ ແມ່ນຈະຕ້ອງຢູ່ໃນຂອບເຂດຫລືຂຶ້ນກັບສ່ວນບຸກຄົນ. ພວກເຮົາບໍ່ອະນຸຍາດໃຊ້ຊື່ຂອງແມ່ແຫ່ງການອະທິຖານສົນກົນເຂົ້າໃນບັນຫາການເມືອງທີ່ຢູ່ພາຍນອກ.

ພວກເຮົາຈະສື່ສານກັບຜູ້ໃຫ້ການສະຫນັບສະຫນູນດ້ານການເງິນບົນພື້ນຖານມາດຕະຖານໃນຄວາມຊໍານິຊໍານານໃນຄວາມສັດຈິງ, ຄວາມແນ່ຊັດ, ການເປັນເຈົ້າຂອງໂດຍຮັບຮູ້ວ່າພວກເຮົາຢູ່ຕອນຫນ້າຂອງພະເຈົ້າ.